DEVELOPMENTAL DISABILITIES ADMINISTRATION (DDA)

# ສະພາບເໝາະສົມໄດ້ຮັບໂດຍສະເພາະ ຕໍ່ກັບອາຍຸ ແລະ ຊະນິດຂອງຫລັກຖານ
# Eligible Conditions With Age and Type of Evidence

ສະພາບຂອງຄວາມເສັຽອົງຄະທຸກໆຢ່າງຕ້ອງເລີ້ມຕົ້ນກ່ອນອາຍຸ **18** ປີ, ຖືກຄາດໝາຍວ່າຈະດຳເນີນຕໍ່ໄປຢ່າງບໍ່ແນ່ນອນ, ແລະ ເປັນຜົນເຖິງຂອບເຂດທີ່ສຳຄັນຍິ່ງໃຫຍ່ໃນການປະຕິບັດງານປັບຕົວໂດຍອີງຕາມກົດໝາຍ **WAC 388-823.**

| ສະພາບເໝາະສົມໄດ້ຮັບໂດຍສະເພາະ ຕໍ່ກັບອາຍຸ | | | | |
|---|---|---|---|---|
| **ສະພາບ** | **0 ໄປເຖິງ 3** | **4 ໄປເຖິງ 9** | **10 ໄປເຖິງ 17** | **18 ແລະ ແກ່ກວ່າ** |
| ຄວາມຊັກຊ້າໃນການຈະເຣີນເຕີບໂຕ | **X** | **X** | | |
| ຄວາມເສັຽອົງຄະດ້ານມັນສະມອງ (ID) | | **X** | **X** | **X** |
| ສະມອງພິການ (Cerebral Palsy) | | **X** | **X** | **X** |
| ໂຣກລົມບ້າໝູ (Epilepsy) | | **X** | **X** | **X** |
| ໂຣກລະເມີເພີ້ຝັນ (Autism) | | **X** | **X** | **X** |
| ສະພາບເສັ້ນປະສາດແນວອື່ນຫລືສະພາບແນວອື່ນທີ່ຄ້າຍຄຽງກັບ ຄວາມເສັຽອົງຄະທັງດ້ານສະຕິປັນຍາ | | **X** | **X** | **X** |

| ການກວດເບິ່ງທີ່ຖືກຮັບເອົາວ່າເປັນຫລັກຖານຂອງຂອບເຂດທີ່ສຳຄັນຍິ່ງໃຫຍ່ | |
|---|---|
| ການກວດເບິ່ງຄວາມຮັບຮູ້ | ການປະເມີນຜົນເບິ່ງການປັບຕົວ |
| • Stanford-Binet<br>• Wechsler Intelligence Scales (WISC)<br>• Differential Abilities Scale (DAS)<br>• Kaufman Assessment Battery for Children (K-ABC)<br>• Das-Naglieri Cognitive Assessment System (CAS)<br>• Woodcock Johnson Test of Cognitive Abilities (WJ)<br>• Reynolds Intellectual Assessment Scales, 2nd Edition (RIAS 2)<br><br>ຖ້າຫາກວ່າທ່ານມີຄວາມບົກພ່ອງນຳການຟັງສຽງ, ພາສາອັງກິດບໍ່ແມ່ນພາສາຕົ້ນຕໍຂອງທ່ານ ຫລື ທ່ານເວົ້າຈາບໍ່ໄດ້, FSIQ ຂອງທ່ານຈະຖືກກະຕວງໂດຍການໃຊ້ການກວດເບິ່ງແນວນຶ່ງຢູ່ຂ້າງລຸ່ມນີ້:<br>• Leiter International Performance Scale-Revised (Leiter-R)<br>• Wechsler Intelligence Scales (WISC, WAIS, WNV)<br>• Comprehensive Test of Nonverbal Intelligence (C-TONI)<br>• Kaufman Assessment Battery for Children (K-ABC) Nonverbal scale index | • Vineland Adaptive Behavior Scales (VABS)<br>• Scales of Independent Behavior-Revised (SIB-R)<br>• Inventory for Client and Agency Planning (ICAP)<br>• Adaptive Behavior Assessment System (ABAS) |

## ການກວດພະຍາດ, ຜູ້ກວດພະຍາດ, ແລະ ຫລັກຖານຂອງຂອບເຂດທີ່ສຳຄັນຊຶ່ງຕ້ອງມີ

| ການກວດພະຍາດ | ຜູ້ກວດພະຍາດ | ຂອບເຂດຮ້າຍແຮງ |
|---|---|---|
| ຄວາມຊັກຊ້າໃນການຈະເຣີນເຕີບໂຕ | ບໍ່ກ່ຽວຂ້ອງນຳ | ຄວາມຊັກຊ້າໃນການຈະເຣີນເຕີບໂຕ |
| ຄວາມເສັຽອົງຄະດ້ານມັນສະມອງ | ທ່ານໝໍຈິດວິທະຍາທີ່ມີໃບປະກາດ ຫລື ທ່ານໝໍຈິດວິທະຍາທີ່ຖືກຢັ້ງຢືນ | ການປະເມີນຜົນເບິ່ງການທຳງານປັບຕົວດ້ວຍ ຄະແນນມາດຕະຖານ ≤69, ແລະ ການປະເມີນຜົນເບິ່ງໂຣກຈິດດ້ວຍ FSIQ of ≤69 ຫລື Stanford-Binet IV ດ້ວຍ FSIQ of ≤67 |
| ສະມອງພິການ (Cerebral Palsy), ຫລື ຄວາມເສັຽຫາຍໃນສະມອງທີ່ຄ້າຍຄືກັນຊຶ່ງກໍ່ໃຫ້ເກີດ, quadriplegia, hemiplegia, ຫລື diplegia | ທ່ານໝໍທີ່ມີໃບປະກາດ | ການເລີ້ມມີອາການກ່ອນອາຍຸ 3 ປີ; ແລະ ຫລັກຖານຂອງຄວາມຕ້ອງການສຳລັບຄວາມຊ່ວຍເຫລືອທາງຮ່າງກາຍໂດຍກົງສຳລັບແນວໃດກໍ່ໄດ້ 2 ຢ່າງຂອງສິ່ງຕໍ່ລົງໄປນີ້:ການເຂົ້າຫ້ອງນ້ຳ, ການອາບນ້ຳ, ການກິນອາຫານ, ການນຸ່ງເຄື່ອງ, ການຍ້າຍທີ່ໄປມາ ຫລື ການຕິດຕໍ່ສື່ສານ |
| ໂຣກລົມບ້າໝູ (Epilepsy), ພະຍາດຊັກບ້າ | ທ່ານໝໍໂຣກປະສາດທີ່ຖືກຢັ້ງຢືນໂດຍ ຄະນະກັມມະການ | ພະຍາດຊັກບ້າທີ່ຄວບຄຸມບໍ່ໄດ້ ແລະ ເກີດຂຶ້ນຕະລອດມາ ຫລື ເກີດຂຶ້ນຢູ່ເລື້ອຍໆ ແລະ ການປະເມີນຜົນເບິ່ງການທຳງານປັບຕົວດ້ວຍ ຄະແນນມາດຕະຖານ ≤69 |
| ໂຣກລະເມີເພີ້ຝັນ (Autism), ພະຍາດລະເມີເພີ້ຝັນ (Autistic Disorder) (DSM-IV-TR-299.00), ຫລື ໂຣກລະເມີເພີ້ຝັນໄປທົ່ວທິບ (Autism Spectrum disorder (DSM-5) | ທ່ານໝໍໂຣກປະສາດທີ່ຖືກຢັ້ງຢືນໂດຍຄະນະກັມມະການ;ທ່ານໝໍຈິດວິທະຍາທີ່ຖືກຢັ້ງຢືນໂດຍຄະນະກັມມະການ; ທ່ານໝໍຈິດວິທະຍາທີ່ມີໃບປະກາດ;ທ່ານໝໍປິ່ນປົວເດັກເຣື່ອງການເຕີບໂຕ ແລະ ການປະພຶດທີ່ຖືກຢັ້ງຢືນໂດຍຄະນະກັມມະການ;ທ່ານໝໍທີ່ມີໃບປະກາດຫລື ARNP ທີ່ພົວພັນນຳສູນກາງໂຣກລະເມີເພີ້ຝັນ ຫລື ສູນກາງພັດທະນາ,ຫລື Center of Excellence | ຫລັກຖານຂອງການກວດເບິ່ງກ່ອນອາຍຸ 5 ປີ ແລະ ການປະເມີນຜົນເບິ່ງການທຳງານປັບຕົວດ້ວຍ ຄະແນນມາດຕະຖານ ≤69, ແລະສຳລັບການ ກວດພະຍາດ DSM-5, FSIQ ≤84, ຫລື ໃບແຈ້ງການານວ່າໂຣກລະເມີເພີ້ຝັນກີດກັ້ນທ່ານຈາກການກວດເບິ່ງໂຣກ) |
| ສະພາບເສັ້ນປະສາດ ຫລື ສະພາບແນວອື່ນທີ່ຄ້າຍຄຽງກັບຄວາມເສັຽອົງຄະທັງດ້ານສະຕິປັນຍາ | ທ່ານໝໍທີ່ມີໃບປະກາດ | ການປະເມີນຜົນເບິ່ງການທຳງານປັບຕົວດ້ວຍ ຄະແນນມາດຕະຖານ ≤69, ແລະ FSIQ of ≤77 ຫລື Stanford-Binet IV ດ້ວຍ FSIQ of ≤75, ຫລື ຖ້າຫາກວ່າອາຍຸຕ່ຳກວ່າ 20 ປີ, ຄະແນນການອ່ານທົ່ວໄປ & ວິຊາເລກທົ່ວໄປ ≤69 ສາມາດໃຊ້ແທນການສອບເສັງ FSIQ |